# ການສຶກສາ ດ້ານ ການຄຸ້ມຄອງເດັກ

## ຂໍ້ມູນ ສໍາລັບ ບັນດາ ພໍ່ແມ່ ແລະ ຜູ້ດູແລ

| | |
|---|---|
| ຊື່ ໂຮງຮຽນ<br>Name of school | |
| ຊັ້ນຮຽນທີ່ເຂົ້າຮ່ວມ<br>Participating Year/s | |
| ຈໍານວນບົດຮຽນຕໍ່ອາທິດ<br>Number of lessons per week | |
| ຜູ້ຕິດຕໍ່ຂອງໂຮງຮຽນ<br>School contact person | |
| ນໍາເບີໂທຣະສັບສໍາລັບຕິດຕໍ່<br>Contact telephone number | |

ບັນດາພໍ່ແມ່ ແລະ ຜູ້ດູແລ ທີ່ຮັກແພງ

ປີນີ້ ບັນດານັກຮຽນໃນປີທີ່ສະແດງໃຫ້ເຫັນຢູ່ຂ້າງເທິງນີ້ຈະມີສ່ວນຮ່ວມໃນຫົວຂໍ້ທີ່ຕ້ອງບັງຄັບໃນການສຶກສາ ການພັດທະນາສ່ວນບຸກຄົນ, ສຸຂະ ພາບ ແລະ ຮ່າງກາຍ (Personal Development, Health and Physical Education (PDHPE)).

ສ່ວນນຶ່ງ ຂອງໂຄງການ PDHPE ຂອງໂຮງຮຽນພວກເຮົາຮວມເອົາການສຶກສາແບບບັງຄັບ ດ້ານການຄຸ້ມຄອງເດັກ. ບາງເນື້ອໃນທີ່ສອນໃນການສຶກສາດ້ານການຄຸ້ມຄອງເດັກແມ່ນກ່ຽວຂ້ອງກັບບັນຫາທີ່ລະອຽດອ່ອນ. ໂຮງຮຽນຈະສອນເນື້ອໃນນີ້ໃນແບບທີ່ ເໝາະສົມກັບອາຍຸ.

ເນື້ອໃນສະເພາະທີ່ຈະຖືກກວມເອົາໃນການສຶກສາດ້ານການຄຸ້ມຄອງເດັກ ນີ້ ແມ່ນສະແດງຢູ່ ໜ້າ ຕໍ່ໄປ.

ສໍາ ລັບຂໍ້ມູນເພີ້ມເຕີມກ່ຽວກັບການສຶກສາດ້ານການຄຸ້ມຄອງເດັກ ຈົ່ງເຂົ້າໄປເບິ່ງຢູ່ພາກ Child protection and respectful relationships education (ການສຶກສາ ດ້ານການຄຸ້ມຄອງເດັກ ແລະ ຄວາມສໍາພັນທີ່ມີຄວາມເຄົາລົບ ) ໃນເວັບໄຊຕ໌ PDHPE ຂອງກະຊວງສຶກສາ.

ຈໍາ ນວນບົດຮຽນຕໍ່ອາທິດໃນເທີມນີ້ ທີ່ຈະມີການສອນ ການສຶກສາດ້ານການຄຸ້ມຄອງເດັກຈະສະ ແດງຢູ່ຂ້າງເທິງ.

ຖ້າທ່ານຕ້ອງການຂໍ້ມູນເພີ້ມເຕີມ, ກະລຸນາຕິດຕໍ່ຫາ ຜູ້ຕິດຕໍ່ຂອງໂຮງຮຽນທີ່ມີຊື່ແລະເບີໂທລະສັບຢູ່ຂ້າງເທິງນີ້.

## ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການນາຍພາສາຊ່ວຍທ່ານໃນການຕິດຕໍ່ທາງໂຮງຮຽນ, ກະລຸນາໂທຫາ ບໍລິການນາຍພາສາທາງໂທລະສັບ ຕາມໝາຍເລກ 13 14 50 ແລະ ຂໍເອົານາຍພາສາເປັນພາສາຂອງທ່ານ. ຜູ້ຮັບສາຍຈະໂທຫາໂຮງຮຽນແລະເອົານາຍພາສາຢູ່ໃນສາຍເພື່ອຊ່ວຍໃນການສົນທະນາ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.

ດ້ວຍຄວາມຮັກແພງ

ທ່ານຄູໃຫຍ່ (Principal)

ເນື້ອໃນທີ່ຈະກວມເອົາໄວ້ໃນການສຶກສາດ້ານການຄຸ້ມຄອງເດັກລວມມີ:

The content which will be covered in child protection education includes:

(Staff to tick the relevant boxes below for Stage 4 content.)

- [ ] ຄວາມສໍາພັນທີ່ຫ່ວງໃຍແລະເຄົາລົບ
  Caring and respectful relationships
- [ ] ສິດ ແລະ ຄວາມຮັບຜິດຊອບໃນ ຄວາມສໍາພັນທີ່ແຕກຕ່າງກັນ
  Rights and responsibilities in different relationships
- [ ] ການລະເມີດ ແລະ ອໍານາດ
  Abuse and power
- [ ] ສິ່ງທີ່ເຊື່ອວ່າເປັນຮູບແບບຂອງເພດຍິງ-ຊາຍ
  Gender stereotypes
- [ ] ເຊື່ອໃຈໃນການຕອບສນອງຂອງຮ່າງກາຍຂອງທ່ານຕໍ່ສະຖານະການທີ່ປອດໄພ ແລະບໍ່ປອດໄພ
  Trusting your body’s response to safe and unsafe situations
- [ ] ອິດທິພົນຂອງຄອບຄົວ, ສື່ ແລະ ໝູ່ເພື່ອນ ຕໍ່ອໍານາດ ແລະ ຄວາມສໍາພັນ
  Influence of family, media and peers on power and relationships
- [ ] ວິທີການເຂົ້າຫາຄວາມຊ່ວຍເຫຼືອ
  How to access help
- [ ] ເຄືອຂ່າຍການສນັບສນູນ
  Support networks
- [ ] ການຂົ່ມເຫັງແລະການກໍ່ກວນ, ລວມທັງການຂົ່ມເຫັງແບບກຽດຊັງພວກທີ່ມັກເພດດຽວກັນ ແລະ ການແບ່ງແຍກເຊື້ອຊາດ
  Bullying and harassment, including homophobic bullying and racism
- [ ] ຍຸດທະສາດການປ້ອງກັນເພື່ອຢູ່ຢ່າງ ປອດໄພ
  Protective strategies to stay safe
- [ ] ຮັບຮູ້ແລະເຂົ້າໃຈຄວາມເຫັນພ້ອມໃນ ຄວາມສໍາພັນທີ່ໃກ້ຊິດ
  Acknowledging and understanding consent in intimate relationships